ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ 1706/ຫກ

ນະຄອນຫຼວງວຽງຈັນ,ວັນທີ 20 ຕຸລາ

## ໜັງສືແຈ້ງເຊີນປະມູນ

## ໂຄງການຈັດຊື້ອຸປະກອນທາງດ້ານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 857/ຖວທ, ລົງວັນທີ 26 ກັນຍາ 2022;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຈັດຊື້-ຈັດຈ້າງງົບປະມານບ້ອງເງິນເກີນແຜນ ປີ 2022 ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 887/ຖວທ, ລົງວັນທີ 25 ກັນຍາ 2023;
- ອີງຕາມ ແຈ້ງການ ການຈັດຕັ້ງຜັນຂະຫຍາຍ ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການນຳໃຊ້ທຶນຮ່ອງເງິນເກີນແຜນປີ 2022 ສະບັບເລກທີ 1479/ຫສນຍ, ລົງວັນທີ 15 ສິງຫາ 2023.

1. ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານລາຍຈ່າຍເງິນບຳເນັດເກັບລາຍຮັບເກີນແຜນປີ 2022 ໂຄງການຈັດຊື້ອຸປະກອນທາງດ້ານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວສຳລັບການສະໜອງອຸປະກອນທັງໝົດແມ່ນບໍ່ໃຫ້ກາຍ 02 ເດືອນ ນັບແຕ່ມື້ລົງມືຈັດຕັ້ງປະຕິບັດ ຈົນເຖິງມື້ມອບ-ຮັບ;
2. ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາບໍລິສັດ,ຫ້າງຮ້ານ ທີ່ມີຄວາມສົນໃຈ ແລະ ຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນໂຄງການຈັດຊື້ອຸປະກອນທາງດ້ານຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ;
3. ໃນການປະມູນ ແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດ ຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ,ມີໃບທະບຽນວິສາຫະກິດ,ທີ່ຖືກຕ້ອງຕາມກົດໝາຍ(ສຳເນົາດ້ານຫຼັງມາພ້ອມ),ໃບອະນຸຍາດດຳເນີນທຸລະກິດດ້ານ: ເຄື່ອງໃຊ້ຫ້ອງການ, ອຸປະກອນໄອທີ ແລະ ອື່ນໆ ທີ່ກ່ຽວຂ້ອງກັບໂຄງການ ແລະ ມີໃບທະບຽນອາກອນປະຈຳປີ 2023, ໃບເສຍອາກອນປະຈຳປີ 2023 ແລະ ການເຄື່ອນໄຫວບັນຊີສຳຮອງ;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈຳປີ 2022 ອອກໂດຍກົມສ່ວຍສາອາກອນ 2023 (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ 1.500.000.000 ກີບ ຂຽນເປັນຕົວໜັງສື (ໜຶ່ງຕື້ຫ້າຮ້ອຍລ້ານກີບ ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;
6. ບໍລິສັດ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ນຳຄະນະຮັບຜິດຊອບໂຄງການທີ່ ຄະນະຮັບ

ຜົດຊອບໂຄງການ ຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ(ພະແນກບັນຊີ), ຖະໜົນເສດຖາທິລາດເລກທີ 01000,ຕູ້.ປນ. 122, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສອບ ຖາມຂໍ້ມູນໂທ: 021 212412; 020 22235717 ນ. ວິນາພອນ ແກ້ວວິລາວົງ ການຂາຍຊອງປະມູນ ເລີ່ມແຕ່ວັນທີ 23 ຕຸລາ 2023(ຕາມໂມງລັດຖະການ)ໃນລາຄາ 2.000.000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;

7. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງ ວັນທີ 14 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ 1 ຂອງຕຶກກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ,ຖະໜົນເສດຖາທິລາດເລກທີ 01000 ຕູ້ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ຊອງປະມູນ ທີ່ ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການຮັບຊອງ, ທຸກຊອງປະມູນຈະເປີດໃນເວລາ 09:00 ໂມງຂອງວັນທີ 14 ພະຈິກ 2023 ທີ່ຫ້ອງປະຊຸມຫ້ອງປະຊຸມຊັ້ນ 1 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ, ຫ້າງຮ້ານເຂົ້າຮ່ວມ.

ຫົວໜ້າຫ້ອງການ

ບົວໄລ ພານຸວົງ